ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 – 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານຂອງນັກກວດສອບອິດສະຫຼະ	4 – 6
ໃບລາຍງານຖານະການເງິນ	7 – 8
ໃບລາຍງານຜົນການດຳເນີນງານ	9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	10
ໃບລາຍງານກະແສເງິນສົດ	11 – 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	13 – 29

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ ເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດພາຍໃຕ້ກິດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນໃນວັນທີ 21 ມິຖຸນາ 2013 ແລະ ໃບອະນຸຍາດດຳເນີນທຸລະກິດເລກທີ 010 ອອກໂດຍ ຄະນະກຳມະການ ຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ຄຄຊ) ໃນວັນທີ 16 ພະຈິກ 2013 ແລະ ໃບທະບຽນວິສາຫະກິດສະບັບປັບປຸງສະບັບເລກທີ 0010/ຈຫວ ຂອງບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 22 ເມສາ 2025 ແລະ ໃບອະນຸຍາດດຳເນີນ ທຸລະກິດ ສະບັບເລກທີ 06/ຄຄຊ ອອກໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ໃນວັນທີ 4 ກໍລະກົດ 2025. ໃນວັນທີ 17 ມີນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 111,111,200 ຮຸ້ນ ໃນມູນ ຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ.

ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ຖືຮຸ້ນ 4 ພາກສ່ວນ: (i) ທະນາຄານສິ່ງເສີມກະສິກຳ, (ii) ບໍລິສັດລາວອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ເຊິ່ງສອງບໍລິສັດດັ່ງກ່າວແມ່ນສ້າງຕັ້ງຢູ່ ສປປ ລາວ ແລະ (iii) ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ ແມ່ນຖືກສ້າງຕັ້ງຢູ່ ສາທາລະນະລັດ ປະຊາຊົນຈີນ, (iv) ນັກລົງທຶນທົ່ວໄປ ໂດຍມີສັດສ່ວນການຖືຮຸ້ນໃນອັດຕາ 36.90%, 18%, 35.10% ແລະ 10% ຕາມລຳດັບ.

ສຳລັບໄລຍະປີທີ່ສິ້ນສຸດ ວັນທີ 31 ທັນວາ 2025 ທຶນຈົດທະບຽນຖອກແລ້ວຂອງບໍລິສັດ ແມ່ນ 111,111,120,000 ກີບ. ນະວັນທີ 31 ທັນວາ 2024 ທຶນຈົດທະບຽນຖອກແລ້ວຂອງບໍລິສັດ ແມ່ນ 100,000,000,000 ກີບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການທີ່ປຶກສາດ້ານການເງິນ, ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ, ນາຍໜ້າຊື້ ຂາຍຫຼັກ ຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ, ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ, ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ບໍລິການ ກອງທຶນສ່ວນບຸກຄົນ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ແລະ ນະມື້ອອກບົດລາຍງານມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ໝູໄຊ ພູມສຸວັນ	ສະພາບໍລິຫານ	ແຕ່ງຕັ້ງ ວັນທີ 10 ພຶດສະພາ 2024
ທ່ານ ລີ ຊາງເຫວີຍ	ຮອງສະພາບໍລິຫານ	ແຕ່ງຕັ້ງ ວັນທີ 22 ກັນຍາ 2017
ທ່ານ ໂຈ ຄຸນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 05 ພຶດສະພາ 2023
ທ່ານ ຈາງ ຫົງບິນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ສີມພິງ ບໍລິບຸດ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ລິນ ລີ	ສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ຫວາງ ເວີຍ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ຣສ. ປອ. ປິຍະ ວົງພິດ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 23 ພຶດສະພາ 2023
ທ່ານ ນະ ຈັນຕະລິວົງ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024

ຂໍ້ມູນທົ່ວໄປ (ຕໍ່)

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ແລະ ນະມື້ອອກບົດລາຍງານມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ລິນ ລີ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ປອ ສຸດທິເດດ ບຸນລືໄຊ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 25 ກຸມພາ 2020
ທ່ານ ພິງສະຫວັດ ລືນາມ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 14 ຕຸລາ 2024

ຕົວແທນດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2025 ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ ລິນ ລີ, ຜູ້ອຳນວຍການໃຫຍ່.

ຜູ້ກວດສອບບັນຊີ

ຜູ້ກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນແອນຢັ້ງ ລາວ ຈຳກັດ.

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີຂໍນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງບໍລິສັດ ນະວັນທີ ແລະ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນດັ່ງກ່າວ. ໃນຂັ້ນຕອນການກະກຽມບົດລາຍງານການເງິນ, ຄະນະບໍລິຫານຄວນປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກໆການປະຕິບັດທີ່ບໍ່ສອດຄ່ອງກັບມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າ ບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຂອງບໍລິສັດຕ້ອງຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ໄດ້ບັນທຶກໄວ້ນັ້ນ ແມ່ນມີຄວາມຖືກຕ້ອງ ສົມເຫດສົມຜົນ ຢູ່ຕະຫຼອດເວລາ, ບົດລາຍງານຖານະທາງການເງິນຂອງບໍລິສັດ ສາມາດເຊື່ອຖື ແລະ ສອດຄ່ອງກັບການບັນທຶກລະບົບບັນຊີທີ່ໄດ້ນຳໃຊ້. ບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີການຄົ້ນຫາ ແລະ ປ້ອງກັນກ່ຽວກັບຄວາມບໍ່ໂປ່ງໃສ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນນະປີທີ່ສິ້ນສຸດ.

ການຮັບຮອງເອກະສານລາຍງານການເງິນ

ພວກຂ້າພະເຈົ້າຂໍຮັບຮອງເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ໃນນາມຂອງຄະນະອຳນວຍການ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2026

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ເຈົ້າຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ພວກຂ້າພະເຈົ້າໄດ້ກວດສອບເອກະສານລາຍງານການເງິນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2025, ແລະ ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນຂອງເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ລວມເຖິງ ນະໂຍບາຍການບັນຊີທີສຳຄັນ.

ຕາມຄວາມຄິດເຫັນຂອງພວກຂ້າພະເຈົ້າ, ຂໍ້ມູນຂອງເອກະສານລາຍງານການເງິນແມ່ນສອດຄ່ອງກັບນະໂຍບາຍທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍເລກທີ 3 ໃນເອກະສານລາຍງານການເງິນ.

ພື້ນຖານການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ (ISAs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານີ້ ໄດ້ຖືກອະທິບາຍເພີ່ມເຕີ່ມ ໃນຫົວ *ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າ.* ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີຂອງ ສະພາບມາດຕະຖານສາກົນດ້ານຈັນຍາບັນ (ລວມເຖິງມາດຕະຖານດ້ານການກວດສອບສາກົນ) (IESBA Code) ຕາມທີ່ກຳນົດໄວ້ໃນບົດລາຍງານການເງິນຂອງບໍລິສັດທີ່ມີຜົນປະໂຫຍດແກ່ສາທາລະນະພ້ອມທັງຂໍ້ກຳນົດດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບບົດລາຍງານການເງິນຂອງບໍລິສັດທີ່ມີຜົນປະໂຫຍດແກ່ສາທາລະນະ ໃນ ສປປ ລາວ. ນອກຈາກນີ້, ຍັງໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆຕາມທີ່ກຳນົດໄວ້ໃນຂໍ້ກຳນົດດັ່ງກ່າວ ແລະ ໃນກົດຈັນຍາບັນທາງບັນຊີຂອງ ສະພາບມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍບໍລິສັດ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2, ເອກະສານລາຍງານການເງິນແມ່ນໄດ້ຖືກກະກຽມເພື່ອຊ່ວຍຄະນະອຳນວຍການໃນການລາຍງານຕາມຂໍ້ກຳນົດຂອງເຈົ້າຂອງ. ດ້ວຍເຫດນີ້, ເອກະສານລາຍງານການເງິນອາດບໍ່ເໝາະສົມສຳລັບຈຸດປະສົງອື່ນ. ບົດລາຍງານຂອງພວກຂ້າພະເຈົ້າແມ່ນມີຈຸດປະສົງ ເພື່ອເປັນຂໍ້ມູນ ແລະ ນຳໃຊ້ສະເພາະຄະນະອຳນວຍການຂອງບໍລິສັດ ແລະ ເຈົ້າຂອງເທົ່ານັ້ນ ແລະ ບໍ່ຄວນແຈກຢາຍ ຫຼື ນຳໃຊ້ໂດຍພາກສ່ວນອື່ນ. ພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

ບັນຫາທີ່ສຳຄັນໃນການກວດສອບ

ບັນຫາທີ່ສຳຄັນໃນການກວດສອບແມ່ນບັນຫາທີ່ເກີດຈາກການໃຊ້ດຸນພິນິດແບບມືອາຊີບຂອງພວກຂ້າພະເຈົ້າ, ເຊິ່ງມີຄວາມສຳຄັນຫຼາຍໃນການກວດສອບເອກະສານລາຍງານການເງິນຂອງປີປະຈຸບັນ. ບັນຫາເຫຼົ່ານີ້ໄດ້ຖືກລະບຸໄວ້ໃນເນື້ອໃນຂອງເອກະສານລາຍງານການເງິນທີ່ກວດສອບໂດຍພວກຂ້າພະເຈົ້າໂດຍລວມ ແລະ ໃນຮູບແບບຄຳເຫັນຂອງພວກຂ້າພະເຈົ້າ ແລະ ພວກຂ້າພະເຈົ້າບໍ່ໄດ້ສະໜອງຄຳເຫັນແຍກຍ່ອຍກ່ຽວກັບບັນຫາດັ່ງກ່າວ. ສຳລັບບັນຫາລຸ່ມນີ້, ພວກຂ້າພະເຈົ້າໄດ້ໃຫ້ນິຍາມວິທີການຄົ້ນພົບບັນຫາທີ່ສະໜອງໃນເນື້ອໃນດັ່ງກ່າວ.

ພວກຂ້າພະເຈົ້າ ໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໄວ້ໃນວັກ ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນໃນບົດລາຍງານ ຂອງພວກຂ້າພະເຈົ້າ, ລວມທັງບັນຫາທີ່ກ່ຽວຂ້ອງກັບບັນຫາເຫຼົ່ານີ້. ດັ່ງນັ້ນ, ການກວດສອບຂອງພວກຂ້າພະເຈົ້າ ລວມທັງການປະຕິບັດບັນດາຂັ້ນຕອນທີ່ອອກແບບມາເພື່ອຕອບສະໜອງຕໍ່ການປະເມີນຄວາມສ່ຽງທີ່ມີສາລະສຳຄັນຂອງເອກະສານລາຍງານການເງິນ. ຜົນຂອງຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ລວມທັງບັນດາຂັ້ນຕອນເພື່ອແກ້ໄຂບັນຫາດັ່ງລຸ່ມນີ້, ເປັນພື້ນຖານໃນການອອກຄຳເຫັນຂອງພວກຂ້າພະເຈົ້າ ຕໍ່ເອກະສານລາຍງານການເງິນ.

ບັນຫາທີ່ສຳຄັນໃນການກວດສອບ	ວິທີການກວດສອບຂອງບັນຫາທີ່ສຳຄັນໃນການກວດສອບ
ຄວາມສາມາດໃນການຮຽກເກັບເງິນຄືນກັບລູກໜີ້ຄ່າທຳນຽມນາຍໜ້າ ນະວັນທີ 31 ທັນວາ 2025, ບໍລິສັດໄດ້ບັນທຶກລາຍຮັບຄ້າງຮັບຈາກຄ່ານາຍໜ້າເປັນຈຳນວນ 10,292,557,470 ກີບ. ລາຍຮັບດັ່ງກ່າວແມ່ນເກີດຈາກຄ່າທຳນຽມການບໍລິການ ຫຼື ຄ່ານາຍໜ້າໃນການຊ່ວຍໂອນຫຸ້ນ 35.69% ຂອງບໍລິສັດເປົ້າໝາຍ. ດັ່ງນັ້ນ ຈຶ່ງຖືກພິຈາລະນາໃຫ້ເປັນບັນສຳຄັນໃນການກວດສອບ ເນື່ອງຈາກເປັນຍອດຄົງຄ້າງທີ່ສຳຄັນ ແລະ ຈຳເປັນຕ້ອງມີການປະເມີນຄວາມສາມາດໃນການເກັບຄືນໜີ້ຄ້າງຮັບ. ນະວັນທີຂອງບົດລາຍງານ, ຫຸ້ນຈຳນວນ 35.69% ໄດ້ຈົດຖະບຽນພາຍໃຕ້ຊື່ຂອງນັກລົງທຶນຄົນຈີນໂດຍການໂອນຫຸ້ນດັ່ງກ່າວໄດ້ສຳເລັດໃນວັນທີ 29 ພະຈິກ 2022, ແຕ່ນັກລົງທຶນຍັງບໍ່ໄດ້ມີການຊຳລະເງິນ. ເຖິງແມ່ນວ່າກຳນົດໄລຍະການຈ່າຍເງິນເດີມຈະຢູ່ໃນເດືອນ ກັນຍາ 2024 ທີ່ຜ່ານມາ, ແຕ່ທາງຄະນະບໍລິຫານໄດ້ຮັບການຊຳລະເງິນພຽງບາງສ່ວນໃນເດືອນ ຕຸລາ 2024 ແລະ ໄດ້ຂະຫຍາຍກຳນົດເວລາການຊຳລະເງິນຄັ້ງສຸດທ້າຍໃນຈີນເຖິງເດືອນ ມິຖຸນາ 2026. ຄະນະບໍລິຫານບໍ່ໄດ້ບັນທຶກການຕັ້ງສຳຮອງເງິນແຮຂອງໜີ້ສູນ.	ຂະບວນການກວດສອບຂອງພວກຂ້າພະເຈົ້າ ໄດ້ປະກອບມີການປະເມີນ ແລະ ເຂົ້າໃຈຂໍ້ຕົກລົງຕາມສັນຍາເພື່ອກວດສອບເງື່ອນໄຂທີ່ກ່ຽວຂ້ອງກັບການບໍລິການ ແລະ ເງື່ອນໄຂການຊຳລະເງິນອີງຕາມສັດສ່ວນການຖືຫຸ້ນ. ທົບທວນຄືນບົດບັນທຶກກອງປະຊຸມເພື່ອຢັ້ງຢືນຂໍ້ຕົກລົງໃນການເລື່ອນກຳນົດເວລາການຊຳລະ ແລະ ການປັບໄໝທີ່ກ່ຽວຂ້ອງກັບການບໍ່ປະຕິບັດຕາມສັນຍາ. ນອກຈາກນີ້, ພວກຂ້າພະເຈົ້າຍັງໄດ້ສອບຖາມກັບຄະນະບໍລິຫານຂອງ ບໍລິສັດ ຫຼັກຊັບລາວ-ຈີນ ມະຫາຊົນ ເພື່ອຢັ້ງຢືນຖານະຂອງຂະບວນການໂອນຫຸ້ນ ເພື່ອໃຫ້ໝັ້ນໃຈວ່າສັດສ່ວນຫຸ້ນທີ່ຍັງເຫຼືອຍັງບໍ່ໄດ້ຖືກໂອນ. ສຸດທ້າຍນີ້, ພວກຂ້າພະເຈົ້າໄດ້ປະເມີນການພິຈາລະນາຂອງຄະນະບໍລິຫານກ່ຽວກັບການບໍ່ຕັ້ງສຳຮອງ ໂດຍການທ້າທາຍຄວາມເປັນໄປໄດ້ຂອງໄລຍະເວລາທີ່ປັບປຸງໃຫມ່ ແລະ ການປະເມີນຄວາມເໝາະສົມຂອງການເຜີຍແຜ່ທີ່ກ່ຽວຂ້ອງ.

ຄວາມຮັບຜິດຊອບຂອງຄະນະອຳນວຍການຂອງບໍລິສັດຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການຂອງບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບນະໂຍບາຍການບັນຊີດັ່ງທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະອຳນວຍການເຫັນວ່າ ວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະອຳນວຍການ ມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະອຳນວຍການບໍລິສັດຫາກເຫັນວ່າທຸລະກິດບໍ່ມີຄວາມສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະອຳນວຍການບໍລິສັດ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າ ແມ່ນເພື່ອຮັບປະກັນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມ ແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີຜົນທີ່ພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະອຳນວຍການ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິສັດຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະອຳນວຍການກ່ຽວກັບບັນຫາຕ່າງໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ບັນຫາການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ຍົກເວັ້ນທີ່ສຳຄັນຕ່າງໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ກະຊວງ ການ
ບໍລິສັດ
ເອີນແອນຢັ້ງລາວ
ຈຳກັດ
Ernst & Young Lao
Co.,Ltd
ນະຄອນ ຫຼວງ ວຽງຈັນ

ທ່ານ ອັນ ເລ
ຮຸ້ນສ່ວນ

ໃບອະນຸຍາດດຳເນີນການກວດສອບ
ເລກທີ 018/LCPAA APT-29

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2026

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2025

ສະກຸນເງິນ: ກີບ

ຊັບສິນ	*ບົດອະທິບາຍ ເລກທີ*	*31 ທັນວາ 2025*	*31 ທັນວາ 2024*
A. ຊັບສິນໝຸນວຽນ		**120,834,456,650**	**71,466,398,822**
I. ເງິນສົດ	**4**	***58,241,775,838***	**5,789,133,108**
1. ເງິນສົດໃນຄັງ		4,110,000	-
2. ເງິນຝາກຢູ່ທະນາຄານ		31,187,797,392	1,592,743,476
3. ເງິນຝາກລູກຄ້າ		27,049,868,446	4,196,389,632
II. ໜີ້ຕ້ອງຮັບໝຸນວຽນ		***29,191,094,372***	**23,837,214,674**
1. ໜີ້ຕ້ອງຮັບການຄ້າ	5	28,706,575,151	20,918,894,065
2. ໜີ້ຕ້ອງຮັບອື່ນໆ		-	1,680,000,000
3. ດອກເບ້ຍຕ້ອງຮັບ		484,519,221	1,238,320,609
III. ການລົງທຶນໄລຍະສັ້ນ		***32,097,964,630***	**40,694,899,300**
1. ການລົງທຶນໃນຫຼັບຊັບ	6	31,098,657,630	28,421,563,300
2. ເງິນຝາກມີກຳນົດໄລຍະສັ້ນ	7	500,000,000	10,000,000,000
3. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ	13	499,307,000	2,273,336,000
IV. ຊັບສິນໝຸນວຽນອື່ນໆ		***1,303,621,810***	**1,145,151,740**
1. ຊັບສິນໝຸນວຽນອື່ນໆ	8	1,303,621,810	1,145,151,740
B. ຊັບສິນບໍ່ໝຸນວຽນ		**116,721,928,147**	**93,594,903,560**
I. ຊັບສິນບັດຄົງທີ່		***2,323,576,947***	**2,343,726,160**
1. ຊັບສິນບັດຄົງທີ່ມີຕົວຕົນ	9	2,173,352,411	2,341,132,363
2. ຊັບສິນບັດຄົງທີ່ບໍ່ມີຕົວຕົນ	10	1,742,488	2,593,797
3. ຊັບສິນກຳລັງກໍ່ສ້າງ	11	148,482,048	-
II. ການລົງທຶນໄລຍະຍາວ		***114,398,351,200***	**91,251,177,400**
1. ເງິນຝາກມີກຳນົດໄລຍະຍາວ	7	23,000,000,000	15,000,000,000
2. ການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ	12	69,615,560,000	63,560,640,000
3. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ	13	21,782,791,200	12,690,537,400
ລວມຊັບສິນ		**237,556,384,797**	**165,061,302,382**

ສະກຸນເງິນ: ກີບ

ໜີ້ສິນ ແລະ ທຶນເຈົ້າຂອງ	*ບົດອະທິບາຍ ເລກທີ*	*31 ທັນວາ 2025*	*31 ທັນວາ 2024*
A. ໜີ້ສິນ		**72,654,704,485**	**39,781,466,697**
I. ໜີ້ສິນໝຸນວຽນ		***72,654,704,485***	**39,781,466,697**
1. ເງິນກູ້ຢືມໄລຍະສັ້ນ	14	26,246,681,488	26,248,421,223
2. ລາຍຮັບລໍຖ້າສະສາງ	15	8,635,769,765	8,635,769,765
3. ໜີ້ຕ້ອງສິ່ງໃຫ້ແກ່ລູກຄ້າ	16	27,049,868,446	4,196,389,632
4. ໜີ້ຕ້ອງສິ່ງໃຫ້ບໍລິສັດຫຼັກຊັບ	17	10,335,366,020	-
5. ໜີ້ຕ້ອງສິ່ງອື່ນໆ		360,884,766	332,120,467
6. ຜົນປະໂຫຍດຂອງພະນັກງານ	18	26,134,000	368,765,610
B. ທຶນເຈົ້າຂອງ		**164,901,680,312**	**125,279,835,685**
I. ທຶນ		***164,901,680,312***	**125,279,835,685**
1. ທຶນຈົດທະບຽນທີ່ຖອກແລ້ວ	19	111,111,120,000	100,000,000,000
2. ສ່ວນເພີ່ມມູນຄ່າຮຸ້ນ	19.2	2,360,038,519	-
3. ກຳໄລສະສົມ		29,224,275,516	10,206,778,619
4. ຄັງສຳຮອງຕາມລະບຽບການ		4,837,839,729	2,107,500,518
5. ຄັງສຳຮອງສ່ວນປ່ຽນແປງຂອງຫຼັກຊັບມີໄວ້ເພື່ອຂາຍ	12	16,341,335,000	11,938,485,000
6. ຄັງສຳຮອງຂະຫຍາຍທຸລະກິດ		1,027,071,548	1,027,071,548
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**237,556,384,797**	**165,061,302,382**

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2026

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ນະວັນທີ 31 ທັນວາ 2025

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍ ເລກທີ*	*2025*	*2024*
1. ລາຍຮັບ		**43,824,002,467**	**15,805,189,364**
ເຊິ່ງໃນນັ້ນ:			
- ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມ	21	33,017,959,190	11,664,856,185
- ລາຍຮັບດອກເບ້ຍ		2,420,506,451	2,115,627,559
- ລາຍຮັບເງິນປັນຜົນຈາກການລົງທຶນຫຼັກຊັບ		1,975,160,320	1,274,985,500
- ກຳໄລສຸດທິຈາກການຂາຍຫຼັກຊັບລົງທຶນ		4,791,454,057	3,211,000
- ລາຍຮັບອື່ນໆໃນການດຳເນີນງານ		1,618,922,449	746,509,120
2. ລາຍຈ່າຍ		**(16,520,610,359)**	**(4,484,391,136)**
ເຊິ່ງໃນນັ້ນ:			
- ລາຍຈ່າຍນາຍໜ້າ ແລະ ຄ່າທຳນຽມ	21	(8,514,831,429)	(1,154,240,357)
- ກຳໄລໃນມູນຄ່າຍຸຕິທຳຂອງການລົງທຶນຫຼັກຊັບໄລຍະສັ້ນ		6,156,313,273	4,471,269,930
- ຄ່າໃຊ້ຈ່າຍພະນັກງານ		(9,411,922,731)	(3,884,638,107)
- ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	9,10	(348,753,557)	(139,406,119)
- ລາຍຈ່າຍດອກເບ້ຍ		(125,194,500)	(128,128,500)
- ລາຍຈ່າຍອື່ນໆໃນການດຳເນີນງານ	22	(4,276,221,415)	(3,649,247,983)
3. ກຳໄລກ່ອນອາກອນ		**27,303,392,108**	**11,320,798,228**
4. ລາຍຈ່າຍອາກອນກຳໄລ	23	-	-
5. ກຳໄລສຸດທິຫຼັງອາກອນ		**27,303,392,108**	**11,320,798,228**
ກຳໄລຂັ້ນພື້ນຖານຕໍ່ຮຸ້ນ		24.57	11.32

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2026

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ນະວັນທີ 31 ທັນວາ 2025

ສະກຸນເງິນ: ກີບ

	ທຶນຈົດທະບຽນ ຖອກແລ້ວ	*ສ່ວນເພີ່ມມູນຄ່າຮຸ້ນ*	*ຄັງສຳຮອງຕາມ ລະບຽບການ*	*ຄັງຂະຫຍາຍທຸລະກິດ*	*ຄັງສຳຮອງສ່ວນປ່ຽນ ແປງຂອງຫຼັກຊັບມີໄວ້ ເພື່ອຂາຍ*	*ກຳໄລ/(ຂາດທຶນ) ສະສົມ*	*ລວມ*
ຍອດເຫຼືອນະວັນທີ 1 ມັງກອນ 2024	**100,000,000,000**	**-**	**975,420,695**	**1,027,071,548**	**(1,117,755,000)**	**18,060,214**	**100,902,797,457**
ກຳໄລສຸດທິສຳລັບປີ 2024	-	-	-	-	-	11,320,798,228	11,320,798,228
ການຈັດສັນຄັງສຳຮອງຕາມລະບຽບການ	-	-	1,132,079,823	-	-	(1,132,079,823)	-
ກຳໄລມູນຄ່າຍຸຕິທຳຂອງການລົງທຶນຫຼັກຊັບເພື່ອຂາຍ	-	-	-	-	13,056,240,000		13,056,240,000
ຍອດເຫຼືອນະວັນທີ 31 ທັນວາ 2024	**100,000,000,000**	**-**	**2,107,500,518**	**1,027,071,548**	**11,938,485,000**	**10,206,778,619**	**125,279,835,685**
ກຳໄລສຸດທິສຳລັບປີ 2025	-	-	-	-	-	27,303,392,108	27,303,392,108
ຈ່າຍເງິນປັນຜົນ (*)	-	-	-	-	-	(5,555,556,000)	(5,555,556,000)
ການຈັດສັນຄັງສຳຮອງຕາມລະບຽບການ	-	-	2,730,339,211	-	-	(2,730,339,211)	-
ຮັບໃນມູນຄ່າການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ	-	-	-	-	4,402,850,000	-	4,402,850,000
ທຶນຈົດທະບຽນທີ່ຖອກແລ້ວພາຍໃນໄລຍະ	11,111,120,000	2,360,038,519	-	-	-	-	13,471,158,519
ຍອດເຫຼືອນະວັນທີ 31 ທັນວາ 2025	**111,111,120,000**	**2,360,038,519**	**4,837,839,729**	**1,027,071,548**	**16,341,335,000**	**29,224,275,516**	**164,901,680,312**

(*): ຕາມມະຕິຄະນະບໍລິຫານບໍລິສັດ ເລກທີ 006/ບລຈ ລົງວັນທີ 12 ກັນຍາ 2025, ບໍລິສັດໄດ້ຈ່າຍເງິນປັນຜົນຈຳນວນ 5 ກີບຕໍ່ຫຸ້ນ. ລວມທັງໝົດ 5,555 ລ້ານກີບ.

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2026

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍເລກທີ*	*2025*	*2024*
I. ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**27,303,392,108**	**11,320,798,228**
ການດັດແກ້ສຳລັບ:		-	-
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ	9,10	348,753,557	139,406,120
ລາຍຈ່າຍດອກເບ້ຍ		125,194,500	125,127,500
ປ່ຽນແປງໃນມູນຄ່າຍຸຕິທຳຈາກການລົງທຶນໃນຫຼັກຊັບ		6,156,313,273	(4,471,269,930)
ກຳໄລສຸດທິສະສາງຊັບສິນບັດຄົງທີ່		-	(1,469,899)
ລາຍຮັບດອກເບ້ຍ		(2,420,506,451)	(2,115,627,559)
ເງິນປັນຜົນຈາກການລົງທຶນໃນຫຼັກຊັບ		(1,975,160,320)	(1,274,985,500)
ການດັດແກ້ທຶນໝຸນວຽນ:			
ປ່ຽນແປງສຸດທິຂອງໜີ້ຕ້ອງຮັບ		(6,107,681,086)	(7,976,210,318)
ປ່ຽນແປງສຸດທິຂອງການລົງທຶນຫຼັກຊັບ		(8,833,407,603)	-
ປ່ຽນແປງສຸດທິຂອງຊັບສິນໝຸນວຽນອື່ນໆ		(158,470,070)	9,211,683,012
ປ່ຽນແປງສຸດທິຂອງໜີ້ຕ້ອງສົ່ງ		33,217,609,134	(472,175,235)
ປ່ຽນແປງສຸດທິຂອງລາຍຮັບລໍຖ້າສະສາງ		-	8,635,769,766
ປ່ຽນແປງຂອງພັນປະໂຫຍດພະນັກງານ		(342,631,610)	(6,717,425)
ລາຍຮັບດອກເບ້ຍ		3,174,307,838	1,413,817,706
ອາກອນທີ່ໄດ້ຊຳລະ	23	-	-
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**50,487,713,270**	**14,528,146,465**
II. ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່	9,10	(180,122,296)	(2,349,206,632)
ຮັບຈາກການຂາຍຊັບສິນບັດຄົງທີ່		-	13,899,300
ລົງທຶນໃນເງິນຝາກໄລຍະຍາວ		9,500,000,000	(15,000,000,000)
ຮັບຈາກການໄຖ່ຖອນເງິນຝາກມີກຳນົດໄລຍະຍາວ		(8,000,000,000)	8,000,000,000
ຮັບຈາກການຂາຍ ຫຼັກຊັບປະເພດມີໄວ້ເພື່ອຂາຍ		(1,652,070,000)	(700,590,000)
ລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ		(7,318,224,800)	(10,523,840,400)
ສ່ວນເພີ່ມມູນຄ່າຮຸ້ນ		2,360,038,519	-
ເງິນປັນຜົນຈາກການລົງທຶນໃນຫຼັກຊັບ		1,975,160,320	1,274,985,500
ຊັບສິນບັດກຳລັງກໍ່ສ້າງ	11	(148,482,048)	-
ກະແສເງິນສົດສຸດທິ(ນຳໃຊ້)/ຈາກກິດຈະກຳການລົງທຶນ		**(3,463,700,305)**	**(19,284,752,232)**

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍ ເລກທີ*	*2025*	*2024*
III. ກິດຈະກຳທາງການເງິນ			
ການຊຳລະເງິນກູ້ຢືມ		(1,739,735)	(82,533,777)
ລາຍຈ່າຍດອກເບ້ຍ		(125,194,500)	(125,127,500)
ຈ່າຍເງິນປັນຜົນ		(5,555,556,000)	-
ທຶນຈົດທະບຽນທີ່ຖອກແລ້ວ	19	11,111,120,000	-
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ		**5,428,629,765**	**(207,661,277)**
ເພີ່ມຂຶ້ນສຸດທິຂອງເງິນສົດ		**52,452,642,730**	**(4,964,267,044)**
ເງິນສົດໃນຕົ້ນປີ		**5,789,133,108**	**10,753,400,152**
ເງິນສົດໃນທ້າຍປີ	**4**	**58,241,775,838**	**5,789,133,108**

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2026

1. ຂໍ້ມູນບໍລິສັດ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ ເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງແຜນການ ແລະ ການລົງທຶນໃນວັນທີ 21 ມິຖຸນາ 2013 ແລະ ໃບອະນຸຍາດດຳເນີນທຸລະກິດເລກທີ 010 ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ຄຄຊ) ໃນວັນທີ 16 ພະຈິກ 2013 ແລະ ໃບທະບຽນວິສາຫະກິດ ສະບັບປັບປຸງສະບັບເລກທີ 0010/ຈຫວ ຂອງບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 22 ເມສາ 2025 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 06/ຄຄຊ ອອກໂດຍສຳນັກງານຄະນະກຳມະການຫຼັກຊັບ ລາວ (ຄຄຊ) ໃນວັນທີ 4 ກໍລະກົດ 2025. ໃນວັນທີ 17 ມີນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 111,111,200 ຮຸ້ນ ໃນມູນຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ.

ໃນວັນທີ 31 ທັນວາ 2025, ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ຖືຮຸ້ນ 4 ພາກສ່ວນ: (i) ທະນາຄານສົ່ງເສີມກະສິກຳ, (ii) ບໍລິສັດລາວອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ເຊິ່ງສອງບໍລິສັດດັ່ງກ່າວແມ່ນສ້າງຕັ້ງຢູ່ ສປປ ລາວ ແລະ (iii) ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ ແມ່ນຖືກສ້າງຕັ້ງຢູ່ສາທາລະນະລັດ ປະຊາຊົນຈີນ, (iv) ນັກລົງທຶນທົ່ວໄປ ໂດຍມີສັດສ່ວນການຖືຮຸ້ນໃນອັດຕາ 36.90%, 18%, 35.10% ແລະ 10% ຕາມລຳດັບ.

ສຳລັບໄລຍະປີທີ່ສິ້ນສຸດ ວັນທີ 31 ທັນວາ 2025 ທຶນຈົດທະບຽນຖອກແລ້ວຂອງບໍລິສັດ ແມ່ນ 111,111,120,000 ກີບ. ນະວັນທີ 31 ທັນວາ 2024 ທຶນຈົດທະບຽນຖອກແລ້ວຂອງບໍລິສັດ ແມ່ນ 100,000,000,000 ກີບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການທີ່ປຶກສາດ້ານການເງິນ, ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ, ນາຍໜ້າຊື້ຂາຍຫຼັກຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ, ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ, ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ບໍລິການກອງທຶນສ່ວນບຸກຄົນ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ພະນັກງານທັງໝົດຂອງບໍລິສັດນະວັນທີ 31 ທັນວາ 2025 ມີ 23 ຄົນ (31 ທັນວາ 2024: 21 ຄົນ).

2. ພື້ນຖານໃນການກະກຽມ

ອີງຕາມກົດໝາຍການບັນຊີສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາຫົວໜ່ວຍທຸລະກິດທີ່ມີຜົນປະໂຫຍດສາທາລະນະ ລວມທັງບໍລິສັດຫຼັກຊັບຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມເອກະສານລາຍງານການເງິນປະຈຳປີ. ອີງຕາມໜັງສືແຈ້ງການ ລົງວັນທີ 27 ເມສາ 2020, ບັນດາຫົວໜ່ວຍທຸລະກິດທີ່ມີຜົນປະໂຫຍດສາທາລະນະໄດ້ຮັບອະນຸຍາດໃຫ້ເລື່ອນການນຳໃຊ້ມາດຕະຖານການລາຍງານການເງິນສາກົນ ຈົນຮອດວັນທີ 1 ມັງກອນ 2026. ປະຈຸບັນ, ຄະນະບໍລິຫານກຳລັງກະກຽມແຜນການປະຕິບັດ IFRS ໃຫ້ສອດຄ່ອງກັບການເອກະສານແຈ້ງການ.

2. ພື້ນຖານໃນການກະກຽມ (ຕໍ່)

ໃນປີ 2024, ເສດຖະກິດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ປະເທດລາວ) ໄດ້ຖືກຮັບຮອງວ່າເປັນ ເສດຖະກິດທີ່ມີອັດຕາເງິນເຟີ້ລະດັບສູງເນື່ອງຈາກບັນລຸຕາມເງື່ອນໄຂທີ່ກຳນົດໃນມາດຕະຖານ IAS 29 "ການລາຍງານການ ເງິນໃນເສດຖະກິດທີ່ມີອັດຕາເງິນເຟີ້ລະດັບສູງ". ເຖິງຢ່າງໃດກໍຕາມ ບໍລິສັດບໍ່ໄດ້ນຳໃຊ້ນະໂຍບາຍການບັນຊີໃດໆເພື່ອຮອງ ຮັບຜົນກະທົບຂອງການເງິນເຟີ້ລະດັບສູງ ໃນຂະນະທີ່ລໍຖ້າຄຳແນະນຳຈາກ ມາດຕະຖານການລາຍງານການເງິນສາກົນ ແລະ ກະຊວງການເງິນ ຕໍ່ກັບບັນຫາດັ່ງກ່າວ. 1 ມັງກອນ 2025 ເປັນຕົ້ນໄປ ເສດຖະກິດຂອງລາວບໍ່ຖືກພິຈາລະນາເປັນເສດຖະກິດ ທີ່ມີອັດຕາເງິນເຟີ້ລະດັບສູງອີກຕໍ່ໄປ. ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025, ບໍລິສັດໄດ້ກະກຽມເອກະສານລາຍງານການ ເງິນປະຈຳປີຂອງຕົນຕາມກົດໝາຍການບັນຊີ ບົດອະທິບາຍຊ້ອນທ້າຍເລກທີ 3 ໂດຍມີຈຸດປະສົງພິເສດເພື່ອຕອບສະໜອງ ຄວາມຕ້ອງການດ້ານການລາຍງານຂອງເຈົ້າຂອງໂດຍເລືອກທີ່ຈະບໍ່ນຳໃຊ້ມາດຕະຖານການບັນຊີຂອງລາວ (FRS) ແລະ ບໍ່ ໃຊ້ມາດຕະຖານບັນຊີລະຫວ່າງປະເທດ (IAS 29).

ສຳລັບປີສິ້ນສຸດວັນທີ 31 ທັນວາ 2025, ເອກະສານລາຍງານການເງິນຂອງບໍລິສັດໄດ້ຖືກກະກຽມໂດຍສອດຄ່ອງກັບ ນະໂຍບາຍການບັນຊີ ຕາມທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ. ເອກະສານລາຍງານ ການເງິນ ແມ່ນໄດ້ຖືກລາຍງານເປັນສະກຸນເງິນລາວກີບ ("ກີບ") ເຊິ່ງແມ່ນສະກຸນເງິນຫຼັກໃນການເຮັດທຸລະກຳ ແລະ ຊຳລະ ສະສາງຂອງບໍລິສັດ.

ທີ່ມາພ້ອມກັບໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານກະແສເງິນສົດ ແລະ ການນຳໃຊ້ບໍ່ ໄດ້ຖືກກຳນົດສຳລັບຜູ້ທີ່ບໍ່ໄດ້ແຈ້ງກ່ຽວກັບຫຼັກການບັນຊີ, ຂັ້ນຕອນ ແລະ ການດຳເນີນງານທີ່ອະທິບາຍຂ້າງລຸ່ມນີ້ ແລະ ນອກຈາກນັ້ນບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນ ແລະ ຜົນປະກອບການ ແລະ ກະແສເງິນສົດຂອງບໍລິສັດໃຫ້ ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ເອກະສານລາຍງານການເງິນ ແມ່ນຖືກກະກຽມ ເພື່ອໃຫ້ບໍລິສັດປະຕິບັດຕາມຂໍ້ກຳນົດໃນການລາຍງານໃຫ້ຜູ້ຖືຮຸ້ນຂອງ ບໍລິສັດ. ດ້ວຍເຫດຜົນດັ່ງກ່າວ, ເອກະສານລາຍງານການເງິນສະບັບນີ້ອາດບໍ່ເໝາະສົມແກ່ການນຳໃຊ້ເພື່ອຈຸດປະສົງອື່ນ ແລະ ຈະບໍ່ຖືກເປີດເຜີຍແກ່ ຫຼື ນຳໃຊ້ໂດຍພາກສ່ວນອື່ນ.

ປີການບັນຊີ

ປີການບັນຊີຂອງບໍລິສັດ ແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີທີ່ບໍລິສັດໄດ້ນຳໃຊ້ໃນການກະກຽມເອກະສານລາຍງານການເງິນເຫຼົ່ານີ້ ແມ່ນສອດຄ່ອງກັບນະໂຍບາຍ ການນຳໃຊ້ໃນການກະກຽມເອກະສານລາຍງານການເງິນຂອງບໍລິສັດສຳລັບປີສິ້ນສຸດວັນທີ 31 ທັນວາ 2024.

3.1. ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດປະກອບມີ ເງິນສົດໃນຄັງ ແລະ ເງິນຝາກຢູ່ທະນາຄານ, ລວມທັງເງິນຝາກຂອງລູກຄ້າ.

ເງິນສົດໃນຄັງ ແລະ ເງິນຝາກຢູ່ທະນາຄານແມ່ນມີສະພາບຄ່ອງສູງ ແລະ ຖືກນຳໃຊ້ເຂົ້າໃນການຄຸ້ມຄອງຄຳໝັ້ນສັນຍາໄລຍະ ສັ້ນ.

ເງິນຝາກຂອງລູກຄ້າປະກອບມີ ເງິນຝາກຂອງຜູ້ລົງທຶນໃນທຸລະກຳການຊື້ຂາຍຫຼັກຊັບ. ບໍລິສັດຍັງໄດ້ຮັບຮູ້ມູນຄ່າທີ່ຊຳລະໃຫ້ ແກ່ລູກຄ້າເປັນໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.2. *ຊັບສິນບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ*

ຊັບສິນບັດຄົງທີ່ທີ່ມີຕົວຕົນ ລວມມີການປັບປຸງ ແລະ ການຕົບແຕ່ງ, ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ ແລະ ພາຫະນະ. ຊັບສິນບັດທີ່ທີ່ບໍ່ມີຕົວຕົນປະກອບດ້ວຍລາຍຈ່າຍກ່ອນການສ້າງຕັ້ງ ແລະ ຊອບແວ. ຊັບສິນບັດຄົງທີ່ທີ່ສະແດງຕາມມູນຄ່າຕົ້ນທຶນທີ່ຊື້ເຂົ້າຫັກລ້າງກັບຄ່າຫຼ້ຍຫ້ຽນສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບມີ ລາຄາຊື້ ບວກໃຫ້ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໂດຍກົງໃນການປ່ຽນສະພາບຂອງຊັບສິນໃຫ້ຢູ່ໃນ ສະ ພາບພ້ອມສຳລັບການນຳໃຊ້.

ຄ່າໃຊ້ຈ່າຍທີ່ຕິດພັນກັບການຊື້ເພີ່ມ, ການປັບປຸງ ແລະ ການປ່ຽນສະພາບຊັບສິນເພື່ອນຳໃຊ້ຄືນໃໝ່ ຈະຖືກຮັບຮູ້ເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ສ້ອມແປງຈະຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ, ຖ້າມີ.

ເມື່ອຊັບສິນຖືກຂາຍ ຫຼື ສະສາງອອກ, ມູນຄ່າຕົ້ນທຶນ ແລະ ຄ່າຫຼ້ຍຫ້ຽນສະສົມຈະຖືກຕັດອອກຈາກໃນສະຫຼຸບຊັບສິນບັດ ຂອງບົດລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນຈາກການສະສາງຕ່າງໆຈະຖືກສະແດງໃນໃບລາຍງານຜົນການ ດຳເນີນງານ.

3.3. *ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ*

ຄ່າຫຼ້ຍຫ້ຽນຂອງຊັບສິນບັດຄົງທີ່ ແມ່ນຄິດໄລ່ຕາມວິທີຫັກຄ່າຫຼ້ຍຫ້ຽນແບບສະໝ່ຳສະເໝີ ຕາມອັດຕາທີ່ໄດ້ກຳນົດຕາມອາຍຸ ການນຳໃຊ້ທີ່ປະເມີນໄວ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍລາຍໄດ້ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ຮັບຮອງ ໂດຍສະພາແຫ່ງຊາດ. ດ້ານລຸ່ມນີ້ແມ່ນອັດຕາປະຈຳປີທີ່ໄດ້ນຳໃຊ້:

ການປັບປຸງ ແລະ ການຕົບແຕ່ງ	10%
ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ	20%
ພາຫະນະ	20%
ຊອບແວ	50%

3.4. *ຊັບສິນກຳລັງກໍ່ສ້າງ*

ຊັບສິນກຳລັງກໍ່ສ້າງ ໝາຍເຖິງຕົ້ນທຶນໃນການຊື້ຊັບສິນເຂົ້າມາໃໝ່ໂດຍທີ່ຍັງບໍ່ໄດ້ສຳເລັດການຕິດຕັ້ງ ຫຼື ຍັງບໍ່ໄດ້ສຳເລັດການ ກໍ່ສ້າງ. ຊັບສິນກຳລັງກໍ່ສ້າງຈະຖືກລະບຸໄວ້ເປັນຕົ້ນທຶນ, ເຊິ່ງລວມເຖິງຕົ້ນທຶນທັງໝົດທີ່ຈຳເປັນໃນການກໍ່ສ້າງ, ສ້ອມແປງ, ຕົບແຕ່ງ, ຂະຫຍາຍ ຫຼື ປັບປຸງໂຄງສ້າງດ້ວຍເຕັກໂນໂລຊີ, ລວມມີ ຕົ້ນທຶນການກໍ່ສ້າງ, ຄ່າເຄື່ອງມື ແລະ ອຸປະກອນ, ຄ່າໃຊ້ ຈ່າຍການຄຸ້ມຄອງໂຄງການ, ຄ່າທີ່ປຶກສາການກໍ່ສ້າງ, ແລະ ຕົ້ນທຶນການກູ້ຢືມທີ່ເຂົ້າເງື່ອນໄຂໃນການປັນທຶກເປັນຊັບສິນ.

ຊັບສິນກຳລັງກໍ່ສ້າງ ຈະຖືກໂອນເປັນຊັບສິນ ກໍຕໍ່ເມື່ອຊັບສິນເຫຼົ່ານີ້ຕິດຕັ້ງສຳເລັດ ຫຼື ເມື່ອໂຄງການກໍ່ສ້າງສຳເລັດສົມບູນ. ການຄິດໄລ່ຄ່າຫຼ້ຍຫ້ຽນ ຈະເລີ່ມຫັກຄ່າຫຼ້ຍຫ້ຽນ ນັບຕັ້ງແຕ່ຊັບສິນເຫຼົ່ານີ້ໄດ້ເລີ່ມໃຊ້ງານ.

ຄ່າໃຊ້ຈ່າຍການກໍ່ສ້າງ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍ ເມື່ອຄ່າໃຊ້ຈ່າຍນັ້ນບໍ່ເຂົ້າເງື່ອນໄຂໃນການຮັບຮູ້ເປັນຊັບສິນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.5. ທຸລະກຳເງິນຕາຕ່າງປະເທດ

ບັນດາທຸລະກຳທີ່ເປັນສະກຸນເງິນຕາຕ່າງປະເທດ ເຊິ່ງບໍ່ແມ່ນສະກຸນເງິນທີ່ບໍລິສັດໃຊ້ໃນການລາຍງານ ("ກີບ") ແມ່ນຖືກບັນທຶກໂດຍແປງຄ່າຕາມອັດຕາແລກປ່ຽນນະມື້ທີ່ທຸລະກຳເກີດຂຶ້ນ. ນະທ້າຍປີ, ຊັບສິນ ແລະ ໜີ້ສິນທາງການເງິນທີ່ບັນທຶກເປັນເງິນຕາຕ່າງປະເທດແມ່ນຈະຖືກຕີມູນຄ່າຕາມອັດຕາແລກປ່ຽນນະມື້ອອກເອກະສານລາຍງານການເງິນ. ທຸກສ່ວນຜິດຕ່ຽງຈາກອັດຕາແລກປ່ຽນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

3.6. ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າຈະຖືກບັນທຶກ ນະຕົ້ນທຶນ. ເງິນແຮສຳລັບຄ່າເສື່ອມຂອງໜີ້ຕ້ອງຮັບທາງການຄ້າຈະຖືກສ້າງຂຶ້ນເມື່ອມີຫຼັກຖານຢັ້ງຢືນວ່າ ບໍລິສັດຈະບໍ່ສາມາດເກັບໜີ້ໄດ້ໃນຈຳນວນທີ່ລູກຄ້າເປັນໜີ້ທັ້ງໝົດ. ມູນຄ່າຂອງເງິນແຮແມ່ນສ່ວນຕ່າງລະຫວ່າງຍອດຍົກມາ ແລະ ມູນຄ່າໜີ້ຕ້ອງຮັບທາງການຄ້າທີ່ສາມາດເກັບຄືນໄດ້. ມູນຄ່າດັ່ງກ່າວນີ້ຈະເປັນມູນຄ່າຈາກການຄາດຄະເນທີ່ດີທີ່ສຸດ ຂອງຄະນະບໍລິຫານບໍລິສັດທີ່ຄາດວ່າຈະສາມາດເກັບໜີ້ໄດ້.

3.7. ຫຼັກຊັບຖືຄອງໄວ້ເພື່ອຄ້າ

ຫຼັກຊັບທີ່ຖືໄວ້ເພື່ອຄ້າສ່ວນໃຫຍ່ແມ່ນການລົງທຶນໃນຫຸ້ນທີ່ຈົດທະບຽນ. ຫຸ້ນທີ່ຈົດທະບຽນທັງໝົດໄດ້ຮັບການຮັບຮູ້ໃນເບື້ອງຕົ້ນຕາມຕົ້ນທຶນ ແລະ ຕໍ່ມາຖືກສະແດງຕາມມູນຄ່າຕະຫຼາດ. ການປ່ຽນແປງມູນຄ່າຕະຫຼາດຂອງຫຸ້ນທີ່ຈົດທະບຽນຈະຖືກຮັບຮູ້ເຂົ້າໃນເອກະສານລາຍງານກຳໄລຂາດທຶນ

3.8. ຫຼັກຊັບຖືຄອງໄວ້ເພື່ອຂາຍ

ການລົງທຶນໃນຫຼັກຊັບຖືຄອງໄວ້ເພື່ອຂາຍປະກອບມີ ຫຼັກຊັບທຶນ ເຊິ່ງບໍ່ໄດ້ຖືກຈັດເປັນປະເພດ ຫຼື ກຳນົດໃຫ້ຖືໄວ້ເພື່ອການຄ້າ.

ຫຼັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າຕາມມູນຄ່າຍຸຕິທຳ.

ກຳໄລ ແລະ ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດຂອງທຶນໃນ "ຄັງສຳຮອງຫຼັກຊັບຖືຄອງໄວ້ເພື່ອຂາຍ". ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫຼື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນ "ສຳຮອງຫຼັກຊັບຖືຄອງໄວ້ເພື່ອຂາຍ" ເຊິ່ງໄດ້ຖືກປັບປ່ຽນໃຫ້ເປັນກຳໄລ ຫຼື ຂາດທຶນສະສົມ. ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນໃນຫຼັກຊັບຖືຄອງໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານວ່າເປັນ 'ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ' ເມື່ອໄດ້ມີການກຳນົດສິດໃນການຊຳລະ.

3.9. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ

ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດລວມມີ ການສານໜີ້ ເຊິ່ງຖືຄອງໃນຮູບແບບທຸລະກິດທີ່ມີວັດຖຸປະສົງໃນການຖືຄອງຊັບສິນ ເພື່ອລວບລວມກະແສເງິນສົດຕາມສັນຍາ.

ໜີ້ທັ້ງໝົດແມ່ນ ຖືກຕີມູນຄ່າໃນເບື້ອງຕົ້ນດ້ວຍມູນຄ່າຍຸດຕິທຳບວກຕົ້ນທຶນທາງກົງໃນການເຮັດທຸລະກຳທີ່ເພີ່ມຂຶ້ນ, ແລະ ຕໍ່ມາດ້ວຍການຫັກຄ່າເສື່ອມຕົ້ນທຶນ ໂດຍໃຊ້ວິທີດອກເບ້ຍທີ່ແທ້ຈິງ. ດອກເບ້ຍທີ່ໄດ້ຮັບໃນຂະນະທີ່ຖືຄອງການລົງທຶນຈົນຄົບກຳນົດຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບເປັນ "ລາຍຮັບດອກເບ້ຍ" ບົນພື້ນຖານຄ້າງຮັບ (ຄຳນຶງເຖິງຜົນຕອບແທນທີ່ແທ້ຈິງຂອງຊັບສິນ) ເວັ້ນເສຍແຕ່ການເກັບລວບລວມແມ່ນມີຄວາມໜ້າສົງໃສ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.10. ການຮັບຮູ້ລາຍຮັບ

(i) ລາຍຮັບຈາກ ຄ່ານາຍໜ້າ ແລະ ຄ່າທຳນຽມ

(ກ) ລາຍຮັບຈາກການສະໜອງບໍລິການດ້ານນາຍໜ້າແມ່ນໄດ້ຖືກຮັບຮູ້ໃນວັນທີ່ມີທຸລະກຳເກີດຂຶ້ນ;

(ຂ) ລາຍຮັບດ້ານການໃຫ້ຄຳປຶກສາ ແລະ ຄຳແນະນຳແມ່ນໄດ້ຖືກຮັບຮູ້ເມື່ອທຸລະກຳທີ່ກ່ຽວຂ້ອງໄດ້ເກີດຂຶ້ນ ຫຼື ການບໍລິການ ທີ່ຕິດພັນມີຄວາມຮຽກຮ້ອງຕ້ອງການ;

(ຄ) ຄ່າທຳນຽມການຄ້ຳປະກັນໄດ້ຖືກຮັບຮູ້ເປັນລາຍຮັບເມື່ອໄດ້ແຈ້ງສິດທີ່ຈະໄດ້ຮັບການຊຳລະເງິນ ອີງຕາມເງື່ອນໄຂຂອງຂໍ້ກຳນົດ ແລະ/ຫຼື ການຕົກລົງການຄ້ຳປະກັນ.

(ii) ລາຍຮັບດອກເບ້ຍຈາກເງິນຝາກມີກຳນົດ

ລາຍຮັບດອກເບ້ຍຈາກເງິນຝາກມີກຳນົດແມ່ນຖືກຮັບຮູ້ໃນພື້ນຖານຄ້າງຮັບ ໂດຍຄຳນຶງເຖິງຜົນຕອບແທນຂອງຊັບສິນ ເວັ້ນເສຍແຕ່ການເກັບລວບລວມແມ່ນມີຄວາມໜ້າສົງໃສ.

(iii) ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ

ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບຖືກຮັບຮູ້ ເມື່ອມີສິດທີ່ຈະໄດ້ຮັບຈາກການຊຳລະຂອງບໍລິສັດເກີດຂຶ້ນ ຍົກເວັ້ນເມື່ອມີຄວາມບໍ່ແນ່ນອນໃນການເກັບຄືນລາຍຮັບທີ່ຖືກຮັບຮູ້ໃນກໍລະນີດັ່ງກ່າວ, ລາຍຮັບເງິນປັນຜົນໄດ້ຖືກຮັບຮູ້ບົນພື້ນຖານເງິນສົດ.

3.11. ອາກອນກຳໄລ

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລຂອງປີປັດຈຸບັນ, ແມ່ນອີງຕາມກົດໝາຍສ່ວຍສາອາກອນທີ່ນຳໃຊ້ໃນ ສປປ ລາວ. ບໍລິສັດມີພັນທະຈ່າຍອາກອນໃນອັດຕາ 20% ຂອງກຳໄລກ່ອນອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງວັນທີ 1 ມັງກອນ 2020. ການແຈ້ງອາກອນຂອງບໍລິສັດຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.12. ຄ້ຳສຳຮອງ

ຄ້ຳສຳຮອງຕາມລະບຽບການ

ອີງຕາມມາດຕາ 154, ກົດໝາຍ ວ່າດ້ວຍວິສາຫະກິດ ລົງວັນທີ 29 ທັນວາ 2022, ບໍລິສັດ ຈຳເປັນຕ້ອງໄດ້ຫັກ 10% ຂອງ ກຳໄລຫຼັງອາກອນໃນແຕ່ລະປີ, ຫຼັງຈາກຫັກຂາດທຶນສະສົມ (ຖ້າມີ) ເຂົ້າໃນຄ້ຳສຳຮອງຕາມລະບຽບການ. ເມື່ອຄ້ຳສຳຮອງນີ້ ສະສົມເຖິງ 50% ຂອງທຶນຈົດທະບຽນ, ບໍລິສັດອາດຈະໂຈະການຫັກດັ່ງກ່າວ, ເວັ້ນເສຍແຕ່ໄດ້ລະບຸໄວ້ໃນລະບຽບຂໍ້ບັງຄັບ ຂອງບໍລິສັດ. ຄ້ຳສຳຮອງນີ້ຈະຖືກນຳໃຊ້ເຂົ້າໃນການເກັບຄືນຈາກການຂາດທຶນຂອງບໍລິສັດ, ເວັ້ນເສຍແຕ່ກົດໝາຍສະບັບອື່ນ ໄດ້ກຳນົດໄວ້.

ຄ້ຳສຳຮອງຂະຫຍາຍທຸລະກິດ

ຄ້ຳສຳຮອງຂະຫຍາຍທຸລະກິດແມ່ນຖືກສ້າງຂຶ້ນໃນແຕ່ລະປີອີງຕາມການຕັດສິນໃຈຂອງຄະນະອຳນວຍການ.

3.13. ກຳໄລຂັ້ນພື້ນຖານຕໍ່ຮຸ້ນ

ກຳໄລຂັ້ນພື້ນຖານຕໍ່ຮຸ້ນ ("EPS") ແມ່ນຄິດໄລ່ເງິນປັນຜົນຂອງກຳໄລພາຍໃນປີການໃຫ້ຈຳນວນຜູ້ຖືຮຸ້ນສາມັນຂອງບໍລິສັດ ແມ່ດ້ວຍການເອົາຈຳນວນສະເລ່ຍຈຳນວນຮຸ້ນສາມັນທັງໝົດພາຍໃນປີ.

4. ເງິນສົດ

	31 ທັນວາ 2025 *ກີບ*	*31 ທັນວາ 2024* *ກີບ*
ເງິນສົດ	4,110,000	-
ເງິນຝາກຢູ່ທະນາຄານ	31,187,797,392	1,592,743,476
- *ເງິນຝາກພາຍໃຕ້ບັນຊີຈຳໜ່າຍຮຸ້ນສາມັນ (**)*	*14,444,924,500*	-
- *ເງິນຝາກຢູ່ກະຊວງການເງິນ*	*3,826,005,721*	-
- *ເງິນຝາກສຳລັບລາຍຮັບ-ລາຍຈ່າຍພັນຖະບັດລັດຖະບານ ຮ່ວມກັບ 2 ບໍລິສັດຫຼັກຊັບ*	*212,524,370*	-
- *ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ*	*1,000,000*	*1,000,000*
- *ເງິນຝາກຂອງບໍລິສັດ*	*12,703,342,801*	*1,591,743,476*
ເງິນຂອງນັກລົງທຶນ (*)	27,049,868,446	4,196,389,632
	58,241,775,838	**5,789,133,108**

(*) ບໍລິສັດໄດ້ຮັບຮູ້ຈຳນວນເງິນດັ່ງກ່າວ ເປັນເງິນຝາກຂອງນັກລົງທຶນສຳລັບການຊື້ຂາຍຫຼັກຊັບໃນບົດອະທິບາຍຊ້ອນທ້າຍ ເລກທີ 16 ຂອງເອກະສານລາຍງານການເງິນກາງປີສຳລັບຈຸດປະສົງພິເສດ.

(**) ອີງຕາມລະບຽບໃນການອອກຈຳໜ່າຍຮຸ້ນເລກທີ 13/ຄຄຊ ລົງວັນທີ 11 ທັນວາ 2024 ບໍລິສັດຈຳເປັນຕ້ອງຝາກເງິນທັງໝົດຈາກການຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມອນຊິນຄັ້ງທຳອິດໄວ້ໃນທະນາຄານທຸລະກິດໃນປະເທດລາວ. ການເຂົ້າເຖິງທຸລະກຳຂອງບໍລິສັດຈະຖືກຈຳກັດໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ເພື່ອປ້ອງກັນການນຳໃຊ້ເງິນຈາກການລະດົມທຶນຈົນກວ່າບໍລິສັດຈະມີແຜນການໃນການຂະຫຍາຍທຸລະກິດ ຫຼື ກິດຈະການຕ່າງໆທີ່ໄດ້ຮັບອະນຸຍາດ.

5. ໜີ້ຕ້ອງຮັບການຄ້າ

	31 ທັນວາ 2025 *ກີບ*	*31 ທັນວາ 2024* *ກີບ*
ໜີ້ຕ້ອງຮັບຄ່າທີ່ປຶກສາທາງດ້ານການເງິນ	806,382,347	631,974,181
ໜີ້ຕ້ອງຮັບຄ່າທຳນຽມຄ້ຳປະກັນ	8,624,622,944	1,386,012,669
ໜີ້ຕ້ອງຮັບຄ່າທຳນຽມການເປັນຕົວແທນ	1,347,242,625	972,579,980
ໜີ້ຕ້ອງຮັບຄ່ານາຍໜ້າ	17,928,327,235	17,928,327,235
	28,706,575,151	**20,918,894,065**

6. ການລົງທຶນໃນຫຼັກຊັບ

	31 ທັນວາ 2025 *ກີບ*	*31 ທັນວາ 2024* *ກີບ*
ຫຼັກຊັບຖືຄອງໄວ້ເພື່ອຄ້າ		
ຕົ້ນທຶນ	34,600,356,578	38,079,575,521
ມູນຄ່າຍຸດຕິທຳທີ່ບໍ່ເກີດຂຶ້ນຈິງສຸດທິ (ຂາດທຶນ)	(3,501,698,948)	(9,658,012,221)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**31,098,657,630**	**28,421,563,300**

7. ເງິນຝາກມີກຳນົດ

	31 ທັນວາ 2025 *ກີບ*	*31 ທັນວາ 2024* *ກີບ*
ເງິນຝາກມີກຳນົດ		
ເງິນຝາກມີກຳນົດໄລຍະສັ້ນ	500,000,000	10,000,000,000
ເງິນຝາກມີກຳນົດໄລຍະຍາວ	23,000,000,000	15,000,000,000
	23,500,000,000	**25,000,000,000**

ລາຍລະອຽດເງິນຝາກມີກຳນົດຂອງບໍລິສັດນະວັນທີ 31 ທັນວາ 2025 ມີດັ່ງລຸ່ມນີ້:

	ຕົ້ນທຶນ *ກີບ*	*ໄລຍະເວລາ*	*ວັນຄົບກຳນົດ*	*ອັດຕາດອກເບ້ຍ* *(% ຕໍ່ປີ)*
ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ	15,000,000,000	24 ເດືອນ	03 ເມສາ 2026	6.32
ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ	8,000,000,000	24 ເດືອນ	02 ຕຸລາ 2027	9.35
ທະນາຄານ ຮ່ວມພັດທະນາ	500,000,000	12 ເດືອນ	21 ມີນາ 2026	10.25
	23,500,000,000			

8. ຊັບສິນໝຸນວຽນອື່ນໆ

	31 ທັນວາ 2025 *ກີບ*	*31 ທັນວາ 2024* *ກີບ*
ຈ່າຍລ່ວງໜ້າຄ່າເຊົ່າ	469,434,775	780,390,981
ຈ່າຍລ່ວງໜ້າຄ່າປະກັນໄພ	110,415,925	97,973,409
ກອງທຶນຮ່ວມເພື່ອຊຳລະທຶດແທນຄວາມສ່ຽງຫຼັກຊັບ	145,569,801	136,817,050
ອື່ນໆ	578,201,309	129,970,300
	1,303,621,810	**1,145,151,740**

9. ຊັບສິນບັດຄົງທີ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ມີດັ່ງລຸ່ມນີ້:

	ການປັບປຸງ ແລະ ການຕົບແຕ່ງ ກີບ	*ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ ກີບ*	*ພາຫະນະ ກີບ*	*ລວມ ກີບ*
ຕົ້ນທຶນ				
ນະວັນທີ 1 ມັງກອນ 2025	**3,025,263,669**	**4,447,531,448**	**1,256,389,000**	**8,729,184,117**
ເພີ່ມຂຶ້ນພາຍໃນປີ	180,122,296	-	-	180,122,296
ສະສາງພາຍໃນປີ	(588,042,403)	(1,823,167,305)	-	(2,411,209,708)
ນະວັນທີ 31 ທັນວາ 2025	**2,617,343,562**	**2,624,364,143**	**1,256,389,000**	**6,498,096,705**
ຄ່າຫຼ້ຍຫ້ຽນສະສົມ				
ນະວັນທີ 1 ມັງກອນ 2025	**1,067,175,316**	**4,064,487,438**	**1,256,389,000**	**6,388,051,754**
ຄ່າຫຼ້ຍຫ້ຽນພາຍໃນປີ	109,627,262	238,274,986	-	347,902,248
ສະສາງພາຍໃນປີ	(588,042,403)	(1,823,167,305)	-	(2,411,209,708)
ນະວັນທີ 31 ທັນວາ 2025	**588,760,175**	**2,479,595,119**	**1,256,389,000**	**4,324,744,294**
ມູນຄ່າຍັງເຫຼືອຕາມບັນຊີສຸດທ້າ				
ນະວັນທີ 1 ມັງກອນ 2025	1,958,088,353	383,044,010	-	2,341,132,363
ນະວັນທີ 31 ທັນວາ 2025	2,028,583,387	144,769,024	-	2,173,352,411

10. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ມີດັ່ງລຸ່ມນີ້:

	ຊ້ອຟແວ ກີບ
ຕົ້ນທຶນ	
ນະວັນທີ 1 ມັງກອນ 2025	392,024,300
ເພີ່ມຂຶ້ນພາຍໃນປີ	-
ນະວັນທີ 31 ທັນວາ 2025	392,024,300
ຄ່າຫຼ້ຍຫ້ຽນສະສົມ	
ນະວັນທີ 1 ມັງກອນ 2025	389,430,503
ຄ່າຫຼ້ຍຫ້ຽນພາຍໃນປີ	851,309
ນະວັນທີ 31 ທັນວາ 2025	390,281,812
ມູນຄ່າຍັງເຫຼືອຕາມບັນຊີສຸດທ້າ	
ນະວັນທີ 1 ມັງກອນ 2025	2,593,797
ນະວັນທີ 31 ທັນວາ 2025	1,742,488

11. ຊັບສິນກຳລັງກໍ່ສ້າງ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ລະບົບຊື້-ຂາຍຫຼັກຊັບ	148,482,048	-
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**148,482,048**	**-**

12. ການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ຮຸ້ນອອກໂດຍ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ		
ຕົ້ນທຶນ (*)	53,274,225,000	51,622,155,000
ມູນຄ່າຍຸດຕິທຳທີ່ບໍ່ເກີດຂຶ້ນຈິງສຸດທິກຳໄລ	16,341,335,000	11,938,485,000
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**69,615,560,000**	**63,560,640,000**

(*) ມູນຄ່າ 53,274,225,000 ນະວັນທີ 31 ທັນວາ 2025 ປະກອບມີ:

(i) ຈຳນວນຮຸ້ນທີ່ຍັງບໍ່ໄດ້ຂາຍ 24,970,300 ຮຸ້ນທີ່ອອກຈຳໜ່າຍຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນໂດຍທີ່ ບໍລິສັດຈະຊື້ຮຸ້ນສ່ວນໜຶ່ງອີງຕາມຂໍ້ຕົກລົງການບໍລິການຄ້ຳປະກັນສຳລັບ IPO. ການຊື້ຮຸ້ນນັ້ນແມ່ນໄດ້ຮັບການສະໜັບສະໜູນທາງການເງິນໂດຍການກູ້ຢືມຈາກ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ – ບໍລິສັດແມ່ ຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ *(ບົດອະທິບາຍເລກທີ 14)*. ໃນວັນທີ 31 ທັນວາ 2025, ມູນຄ່າຂອງຮຸ້ນທັງໝົດແມ່ນ 26,218,815,000. ໃນໄລຍະ 12 ເດືອນບໍລິສັດໄດ້ຂາຍຮຸ້ນ 26,600 ຮຸ້ນມູນຄ່າ 8,067,190 ກີບ ຫຼັງຈາກຫັກຄ່າທຳນຽມ. ອີງຕາມສັນຍາເລກທີ 003/ບລຈ ລົງວັນທີ 20 ພຶດສະພາ 2019 ມາດຕາທີ 3 ໃນກໍລະນີໄດ້ຮັບເງິນຈາກການຂາຍຮຸ້ນຫຼັງຈາກ 6 ເດືອນຈະຕ້ອງໂອນເງິນດັ່ງກ່າວໃຫ້ກັບບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ເວັ້ນເສຍແຕ່ວ່າເງິນຈາກການຈຳໜ່າຍຮຸ່ນມີມູນຄ່າ 400,000,000 ກີບຂຶ້ນໄປ ບໍລິສັດຈະຕ້ອງໂອນເງິນດັ່ງກ່າວຄືນພາຍໃນ 10 ມື້.

(ii) ຈຳນວນຮຸ້ນ 24,755,100 ຮຸ້ນທີ່ບັນທຶກໃນບັນຊີມູນຄ່າຫຼັກຊັບຖືຄອງໄວ້ເພື່ອຂາຍ.ໃນວັນທີ 31 ທັນວາ 2025, ມູນຄ່າຂອງຮຸ້ນທັງໝົດແມ່ນ 27,055,410,000 ກີບ.

13. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ການລົງທຶນໄລຍະສັ້ນ		
ພັນທະບັດລັດຖະບານອອກໂດຍກະຊວງການເງິນ	499,307,000	2,273,336,000
	499,307,000	**2,273,336,000**
ການລົງທຶນໄລຍະຍາວ		
ພັນທະບັດລັດຖະບານອອກໂດຍກະຊວງການເງິນ	21,782,791,200	12,690,537,400
	21,782,791,200	**12,690,537,400**

ລາຍລະອຽດຂອງຮຸ້ນລັດຖະບານອອກໂດຍກະຊວງການເງິນ ນະວັນທີ 31 ທັນວາ 2025 ມີດັ່ງລຸ່ມນີ້:

	ຕົ້ນທຶນ					
	ສະກຸນເງິນ	*ສະກຸນເງິນ ເດີມ*	*ກີບ*	*ໄລຍະ ເວລາ*	*ວັນຄົບກຳນົດ*	*ອັດຕາດອກ ເບ້ຍ(% ຕໍ່ປີ)*
ການລົງທຶນໄລຍະສັ້ນ						
LA100122ABB9	USD	23,000	499,307,000	5 ປີ	29 ພະຈິກ 2026	7.00
			499,307,000			
ການລົງທຶນໄລຍະຍາວ						
LA10012239E5	USD	20,000	434,180,000	3 ປີ	5 ກັນຍາ 2027	6.00
LA10012239E5	USD	42,000	911,778,000	3 ປີ	19 ກັນຍາ 2027	6.00
LA10012297E3	USD	180,000	3,907,620,000	3 ປີ	18 ກໍລະກົດ 2027	6.00
LA100112DEB8	THB	4,350,000	2,994,757,500	3 ປີ	21 ພະຈິກ 2027	6.00
LA10011297E4	THB	3,880,000	2,671,186,000	3 ປີ	18 ກໍລະກົດ 2027	6.00
LA10011239E6	THB	2,626,000	1,807,869,700	3 ປີ	5 ກັນຍາ 2027	6.00
LA10012229D8	USD	100,000	2,170,900,000	2 ປີ	25 ພະຈິກ 2027	5.50
LA10012229D8	THB	10,000,000	6,884,500,000	2 ປີ	25 ພະຈິກ 2027	5.50
		ລວມ	**21,782,791,200**			

14. ເງິນກູ້ຢືມໄລຍະສັ້ນ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງ ຈັນຕອນເໜືອ ຈຳກັດ	26,246,681,488	26,248,421,223
	26,246,681,488	**26,248,421,223**

ນີ້ແມ່ນການກູ້ຢືມທີ່ມີດອກເບ້ຍ ໃນຮູບແບບສະໜັບສະໜຸນເງິນທຶນໃຫ້ແກ່ການຊື້ຮຸ້ນຕາມທີ່ໄດ້ເປີດເຜີຍໃນບົດອະທິບາຍ ເລກທີ 12, ໂດຍມີການຊຳລະສະສາງໂດຍອີງໃສ່ຈຳນວນຮຸ້ນທີ່ໄດ້ຂາຍ. ເງິນປັນຜົນທີ່ໄດ້ຈາກການຖືຄອງຮຸ້ນ ແລະ ກຳໄລ/ ຂາດທຶນຂອງການຂາຍຮຸ້ນຈະຖືເປັນການຈ່າຍດອກເບ້ຍໃຫ້ແກ່ຜູ້ໃຫ້ກູ້ຢືມ.

15. ລາຍຮັບລໍຖ້າສະສາງ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ລາຍຮັບລໍຖ້າສະສາງຈາກການຂາຍຮຸ້ນ (*)	8,635,769,765	8,635,769,765
	8,635,769,765	**8,635,769,765**

(*) ໃນວັນທີ 2 ສິງຫາ 2024, ບໍລິສັດໄດ້ເຊັນສັນຍາກັບບໍລິສັດ Hengshi Chengrui Holding Yunnan Company Limited ສຳລັບການຂາຍຫຸ້ນໃນກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ. ທຸລະກຳດັ່ງກ່າວລວມມີຮຸ້ນ 6,347,700 ຮຸ້ນ, ມູນຄ່າ 8,635,769,765 ກີບ. ເພື່ອປະຕິບັດຕາມຂໍ້ກຳນົດອີງຕາມລະບຽບການທີ່ກຳນົດໄວ້ແລະ ອຳນວຍຄວາມສະດວກໃຫ້ແກ່ການສຳເລັດການໂອນຫຸ້ນ, ບໍລິສັດ Hengshi Chengrui Holding Yunnan Company Limited ຈຳເປັນຕ້ອງສະໜອງເອກະສານການລົງທຶນຕ່າງປະເທດທີ່ຈຳເປັນພາຍໃນ 2026.

16. ໜີ້ຕ້ອງສົ່ງໃຫ້ລູກຄ້າ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ບັນຊີຊຳລະສະສາງຂອງລູກຄ້າ - ຄ່ານາຍໜ້າ	27,049,868,446	4,196,389,632
	27,049,868,446	**4,196,389,632**

17. ໜີ້ຕ້ອງສົ່ງໃຫ້ບໍລິສັດໃນຕະຫຼາດຫຼັກຊັບ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງສົ່ງຄ່ານາຍໜ້າ	5,418,494,985	-
ໜີ້ຕ້ອງສົ່ງຄ່າທີ່ປຶກສາທາງການເງິນ	1,917,434,490	-
ໜີ້ຕ້ອງສົ່ງຄ່າຄ້ຳປະກັນການອອກຈຳໜ່າຍຮຸ້ນ	2,786,912,175	-
ໜີ້ຕ້ອງສົ່ງຄ່າບໍລິຫານສຳລັບຮັບ-ຈ່າຍພັນທະບັດລັດຖະບານ ຮ່ວມກັບ 2 ບໍລິສັດຫຼັກຊັບ	212,524,370	-
	10,335,366,020	**-**

18. ຜົນປະໂຫຍດຂອງພະນັກງານ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໂບນັດ ແລະ ກອງທຶນສະຫວັດດີການ (*)	-	342,357,183
ໜີ້ສິນເງິນເດືອນ	26,134,000	26,408,427
	26,134,000	**368,765,610**

19. ທຶນຈົດທະບຽນທີ່ຖອກແລ້ວ

	31 ທັນວາ 2025		*31 ທັນວາ 2024*	
ຜູ້ຖືຮຸ້ນ	*% ຄວາມເປັນຂອງເຈົ້າ*	*ກີບ*	*% ຄວາມເປັນຂອງເຈົ້າ*	*ກີບ*
ທະນາຄານ ສົ່ງເສີມກະສິກຳ	36.90%	41,000,000,000	41%	41,000,000,000
ບໍລິສັດ ລາວອຸດສາຫະກຳຂໍ້ມູນ ຂ່າວສານ ຈຳກັດ	18.00%	20,000,000,000	20%	20,000,000,000
ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ	35.10%	39,000,000,000	39%	39,000,000,000
ຜູ້ລົງທຶນທົ່ວໄປ	10.00%	11,111,120,000	-	-
	100%	**111,111,120,000**	**100%**	**100,000,000,000**

19.1 ຮຸ້ນສາມັນ

	31 ທັນວາ 2025	
	ຈຳນວນຮຸ້ນສາມັນ	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸມັດ		
ຮຸ້ນທີ່ໄດ້ອອກ ແລະ ຖອກແລ້ວ		
ຮຸ້ນສາມັນ	1,111,111,200	111,111,120,000
ຍອດເຫຼືອທ້າຍປີ	**1,111,111,200**	**111,111,120,000**

ໃນວັນທີ 17 ມີນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 11,111,200 ຮຸ້ນ ໃນມູນຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ.

19.2 ສ່ວນເພີ່ມມູນຄ່າຮຸ້ນ

ສ່ວນເພີ່ມມູນຄ່າຮຸ້ນເກີດຈາກການອອກຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 2,360,038,519 ກີບ, ແມ່ນສ່ວນຕ່າງລະຫວ່າງລາຄາຈຳໜ່າຍ (14,444,456,000 ກີບ) ແລະ ມູນຄ່າໜ້າບັດຂອງຮຸ້ນ (11,111,120,000 ກີບ) ຫຼັງຈາກຫັກຕົ້ນທຶນໃນການອອກຮຸ້ນ (973,297,481 ກີບ).

20. ກຳໄລຂັ້ນພື້ນຖານຕໍ່ຮຸ້ນ

ພື້ນຖານຄິດໄລ່ກຳໄລຕໍ່ຮຸ້ນ ("EPS") ແມ່ນຄິດໄລ່ກຳໄລພາຍໃນປີຫານໃຫ້ຈຳນວນຜູ້ສາມັນຂອງບໍລິສັດ ດ້ວຍການເອົາຈຳນວນສະເລ່ຍຈຳນວນ ຮຸ້ນສາມັນທັງໝົດພາຍໃນປີ.

ຕາຕະລາງຕໍ່ໄປນີ້ສະແດງລາຍຮັບ ແລະ ຂໍ້ມູນຂອງຮຸ້ນທີ່ໃຊ້ເຂົ້າໃນການຄິດໄລ່ກຳໄລຕໍ່ຮຸ້ນ:

	31 ທັນວາ 2025 *ກີບ*	*31 ທັນວາ 2024* *ກີບ*
ກຳໄລທີ່ເປັນໃຫ້ສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ	27,303,392,108	11,320,798,228
ຈຳນວນຮຸ້ນສາມັນສະເລ່ຍທັງໝົດ	1,111,111,200	1,000,000,000
ກຳໄລຕໍ່ຮຸ້ນ	24.57	11.32

21. ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມສຸດທິ

	31 ທັນວາ 2025 *ກີບ*	*31 ທັນວາ 2024* *ກີບ*
ລາຍຮັບ		
ຄ່ານາຍໜ້າຊື້-ຂາຍ ຫຼັກຊັບ	102,262,352	11,145,524
ຄ່າທີ່ປຶກສາທາງດ້ານການເງິນ	11,408,907,055	3,688,433,540
ຄ່າທຳນຽມເປັນຕົວແທນການຂາຍ	10,496,084,208	7,965,277,121
ຄ້ຳປະກັນການອອກຈຳໜ່າຍຮຸ້ນ	11,010,705,575	-
	33,017,959,190	**11,664,856,185**
ລາຍຈ່າຍ		
ຄ່າທີ່ປຶກສາທາງດ້ານການເງິນ	(7,577,744,425)	(39,722,250)
ຄ່າທຳນຽມເປັນຕົວແທນການຂາຍຫຼັກຊັບ	(161,568,000)	(260,337,600)
ຄ່າທຳນຽມຜູ້ຈຳໜ່າຍ	(717,932,059)	(849,942,586)
ຄ່ານາຍອື່ນໆຈາກການຂາຍຫຼັກຊັບ	(57,586,945)	(4,237,921)
	(8,514,831,429)	**(1,154,240,357)**
ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມ, ສຸດທິ	**24,503,127,761**	**10,510,615,828**

22. ລາຍຈ່າຍອື່ນໆໃນການດຳເນີນງານ

	2025 *ກີບ*	*2024* *ກີບ*
ຄ່າເຊົ່າ	878,418,862	1,121,070,924
ຄ່າໃຊ້ຈ່າຍໃນການເດີນທາງ	708,824,290	319,470,057
ຂາດທຶນອັດຕາແລກປ່ຽນ	546,883,399	680,173,736
ຄ່າໃຊ້ຈ່າຍການປະຊຸມ ແລະ ສຳມະນາ	503,450,000	349,846,112
ຄ່າກວດສອບບັນຊີ	237,683,600	153,013,000
ບັນຊີເຄື່ອງໃຊ້ຫ້ອງການ	202,745,482	179,338,894
ຄ່າໃຊ້ຈ່າຍປະກັນໄພ	198,765,764	169,826,386
ລາຍຈ່າຍສຳລັບການບັນເທີງທາງດ້ານທຸລະກິດ	178,749,968	123,911,000
ຄ່າຊ້ອມແປງ ແລະ ຄ່າບຳລຸງຮັກສາ	150,757,609	145,599,459
ການບໍລິການຈາກພາຍນອກ	109,009,188	104,035,970
ຄ່າໃຊ້ຈ່າຍສຳລັບສາທາລະນຸປະໂພກ	102,288,000	88,595,005
ຄ່າໄປສະນີ ແລະ ໂທລະຄົມມະນາຄົມ	46,694,412	37,740,629
ອາກອນ ແລະ ພັນທະອື່ນໆ	45,325,000	9,443,000
ອື່ນໆ	366,625,841	167,183,811
	4,276,221,415	**3,649,247,983**

23. ອາກອນກຳໄລ

ອີງຕາມກົດໝາຍວ່າດ້ວຍອາກອນກຳໄລ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນສັກສິດນຳໃຊ້ໃນວັນທີ 1 ມັງກອນ 2020. ບໍລິສັດໄດ້ມີການຈົດທະບຽນໃນຕະຫຼາດຫຼັກຊັບໃນວັນທີ 17 ມີນາ 2025, ອັດຕາອາກອນກຳໄລ 13% ແມ່ນຖືກນຳໃຊ້ກັບບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວເປັນໄລຍະເວລາສີ່ປີເລີ່ມແຕ່ວັນທີ່ຈົດທະບຽນ ແລະ 20% ສຳລັບປີຕໍ່ໆໄປ. ດັ່ງນັ້ນ, ອັດຕາອາກອນກຳໄລທີ່ໃຊ້ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ແມ່ນ 13% ແລະ ສຳລັບປີສິ້ນສຸດວັນທີ 31 ທັນວາ 2024 ແມ່ນ 20%.

ເນື່ອງຈາກບໍລິສັດໄດ້ຍ້າຍສະຖານທີ່ຕັ້ງໄປ ເຂດເສດຖະກິດພິເສດບຶງທາດຫຼວງ, ຈຶ່ງໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກການດຳເນີນງານເປັນໄລຍະ 2 ປີ, ເລີ່ມຈາກວັນທີ 25 ມິຖຸນາ 2024 ຫາ ວັນທີ 25 ມິຖຸນາ 2026 ທີ່ອອກໃບຢັ້ງຢືນການຈົດທະບຽນວິສາຫະກິດເລກທີ No. 0010 ລົງວັນທີ 25 ມິຖຸນາ 2024.

23. ອາກອນກຳໄລ (ຕໍ່)

ລາຍລະອຽດການຫັກເງິນແຮອາກອນກຳໄລ ("ອກລ") ສຳລັບປີ 2025 ດັ່ງລຸ່ມນີ້:

	2025 *ກີບ*	*2024* *ກີບ*
ກຳໄລກ່ອນອາກອນພາຍໃນປີ	**27,303,392,108**	**11,320,798,228**
ຫຼຸດລົງ:		
ລາຍການທີ່ບໍ່ໃຫ້ຖືເປັນລາຍຮັບ	*(10,360,099,812)*	*(7,304,991,772)*
ລາຍຮັບທີ່ຖືກຍົກເວັ້ນຈາກອາກອນກຳໄລ	*(2,989,678,189)*	*(3,393,824,059)*
ເພີ່ມຂຶ້ນ:		
ລາຍການທີ່ບໍ່ໃຫ້ຖືເປັນລາຍຈ່າຍ	*3,318,497,457*	*2,736,329,908*
ກຳໄລທາງອາກອນສຸດທິ	**17,272,111,564**	**3,358,312,305**
ຂາດທຶນອາກອນຖືກນຳໃຊ້	*(1,271,090,653)*	*(3,358,312,305)*
ຂາດທຶນສຸດທິກ່ອນອາກອນພາຍໃນປີ ແລະ ຫຼັງຫັກຂາດທຶນສະສົມ	**16,001,020,911**	**(1,271,090,653)**
ຄາດຄະເນລາຍຈ່າຍອາກອນກຳໄລພາຍໃນປີໃນອັດຕາ 0% (2024: 0%)	-	-
ອາກອນກຳໄລຕ້ອງມອບໃນຕົ້ນປີ	-	-
ອາກອນກຳໄລໄດ້ຊຳລະພາຍໃນປີ	-	-
ອາກອນກຳໄລທີ່ຕ້ອງມອບທ້າຍປີ	-	-

ການແຈ້ງອາກອນຂອງບໍລິສັດຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

24. ບັນດາລາຍການເຄື່ອນໄຫວກັບພາກສ່ວນກ່ຽວຂ້ອງ

ລາຍລະອຽດລາຍການເຄື່ອນໄຫວສຳຄັນກັບພາກສ່ວນກ່ຽວຂ້ອງພາຍໃນປີດັ່ງລຸ່ມນີ້:

ພາກສ່ວນກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2025*	*31 ທັນວາ 2024*
ທະນາຄານສົ່ງເສີມ	ເຈົ້າຂອງ	ເງິນຝາກກະແສລາຍວັນ	7,368,626	7,525,992
ກະສິກຳ	ເຈົ້າຂອງ	ເງິນຝາກປະຢັດ	3,239,720,146	393,791,338
			3,247,088,772	**401,317,330**

25. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ມີບັນຫາ ຫຼື ເຫດການໃດທີ່ໄດ້ເກີດຂຶ້ນຕັ້ງແຕ່ວັນທີ 31 ທັນວາ 2025 ທີ່ສົ່ງຜົນກະທົບເຮັດໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງບໍລິສັດ.

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2026